**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ — ເລກທີ 126 /ຖວທ

ນະຄອນຫຼວງວຽງຈັນ, ວັນທີ 08 ເມສາ 2022

# ຄຳແນະນຳ
# ການຈັດຕັ້ງປະຕິບັດ ດຳລັດ ວ່າດ້ວຍຊຸດເຄື່ອງນຸ່ງປະຈຳຊາດ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ດຳລັດ ວ່າດ້ວຍຊຸດເຄື່ອງນຸ່ງປະຈຳຊາດ ສະບັບເລກທີ 638/ນຍ, ລົງວັນທີ 01 ທັນວາ 2021.

**ລັດຖະມົນຕີ ອອກຄຳແນະນຳ:**

## I. ຈຸດປະສົງ

1. ເພື່ອສ້າງຄວາມຮັບຮູ້ ແລະ ຄວາມເຂົ້າໃຈ ເພີ່ມຕື່ມບາງບັນຫາໃນການກຳນົດອົງປະກອບ, ມາດຕະຖານ ຊຸດເຄື່ອງນຸ່ງປະຈຳຊາດ ທີ່ກຳນົດໃນ ດຳລັດ ສະບັບ ເລກທີ 638/ນຍ, ລົງວັນທີ 01 ທັນວາ 2021;

2. ເພື່ອຄວາມເປັນເອກະພາບ ໃນການແຕ່ງກາຍຊຸດເຄື່ອງນຸ່ງປະຈຳຊາດ ເຂົ້າຮ່ວມພິທີທາງການ, ພິທີການ ແລະ ພິທີກຳ;

3. ເພື່ອກຳນົດເພີ່ມຕື່ມ ກ່ຽວກັບບາງອົງປະກອບ ແລະ ມາດຕະຖານ ການນຸ່ງຖືຊຸດປະຈຳຊາດ ການແຕ່ງກາຍ ທີ່ບໍ່ໄດ້ກຳນົດໄວ້ ໃນດຳລັດ ວ່າດ້ວຍຊຸດເຄື່ອງນຸ່ງປະຈຳຊາດ, ແຕ່ມີການໃຊ້ແຕ່ງກາຍ ເພື່ອເຂົ້າຮ່ວມພິທີກຳ, ພິທີທາງສາສະໜາ.

## II. ແນະນຳບາງເນື້ອໃນ ແລະ ວິທີການຈັດຕັ້ງປະຕິບັດເພີ່ມຕື່ມ

### ກ. ການແຕ່ງກາຍຂອງທ່ານຍິງ

**1. ເສື້ອ:** ຄວາມຍາວຂອງຕີນເສື້ອ ແມ່ນອີງຕາມຄວາມເໝາະສົມ, ສາມາດອອກແບບ ເພີ່ມຕື່ມ ໃຫ້ສວຍງາມ ຕາມຮູບແບບຂອງໃຜລາວໄດ້ ເຊັ່ນ: ເສື້ອຍົກບ່າໄຫລ່, ເສື້ອຄໍປ້າຍ ມີສາຍ ແລະ ບໍ່ມີສາຍຜູກກໍ່ໄດ້, ແຂນເສື້ອຕິດກະດຸມ ຫຼື ໃສ່ແຂບໃຫ້ ເໝາະສົມກົມກືນ, ສາມາດນຸ່ງຖືໃຫ້ຖືກກາລະເທສະ ຂອງແຕ່ລະພິທີການໄດ້;

**2. ສິ້ນ:** ການນຸ່ງສິ້ນ ໃຫ້ນຸ່ງລ່າມເຖິງບີແຂ່ງສ້ວຍ; ສ່ວນຫົວສິ້ນອາດຈະຕໍ່ດ້ວຍແຜ່ນແພທີ່ຕໍ່າດ້ວຍຝ້າຍ ຫຼື ໄໝ ຫຼື ບໍ່ມີກໍໄດ້;

**3. ຊົງຜົມ:** ເກົ້າຜົມເທິງງ່ຽງຂວາ ຫຼື ເກົ້າຜົມຕໍ່າ ມີປັກປິ່ນເກົ້າ, ສາຍກ້ຽວ ຫຼື ຈັດແຕ່ງຊົງຜົມໃຫ້ຮຽບຮ້ອຍ ຕາມຄວາມເໝາະສົມ;

**4. ເຄື່ອງປະດັບ:** ໃສ່ເຄື່ອງປະດັບຕາມຄວາມເໝາະສົມ.

### ຂ. ການແຕ່ງກາຍຂອງທ່ານຊາຍ:

**1. ເສື້ອ:** ຄວາມຍາວຂອງຕີນເສື້ອ ຕາມຄວາມເໝາະສົມ; ດ້ານຫຼັງເສື້ອແຈກສອງເບື້ອງ ຫຼື ແຈກກາງກໍໄດ້;

**2. ຜ້າກະຕ່ຽວ:** ເປັນການນຸ່ງຖືແບບດັ້ງເດີມຂອງທ່ານຊາຍ ທີ່ໃຊ້ໃນພິທີທາງສາສະໜາ ແລະ ພິທີສົມລົດ;

ຜ້າກະຕ່ຽວ: ເປັນຜ້າຝ້າຍ ຫຼື ຜ້າໄໝ ແລະ ບໍ່ຈຳກັດສີ, ສາມາດໃສ່ແຂບຕີນ ຫຼື ບໍ່ໃສ່ແຂບຕີນກໍໄດ້;

3. **ຊິ້ງຜົມ**: ຈອນໜາ, ຈອນບາງ ຫຼື ຊິ້ງອື່ນທີ່ສຸພາບ;

4. **ຖົງເທົ້າ**: ການແຕ່ງກາຍໃນຊຸດປະຈຳຊາດ ທີ່ນຸ່ງໂສ້ງ ແມ່ນໃຫ້ໃສ່ຖົງເທົ້າສີດຳ ຫຼື ສີມືດ, ສ່ວນຖົງເທົ້າທີ່ໃສ່ນຸ່ງກັບຜ້າກະຕ່ຽວໃນງານບຸນປະເພນີ, ພິທີກຳຕ່າງໆແມ່ນໃຫ້ໃສ່ຖົງເທົ້າສີຂາວ;

5. **ເຄື່ອງປະດັບ**: ໃສ່ເຄື່ອງປະດັບຕາມຄວາມເໝາະສົມ.

**ຄ. ການແຕ່ງກາຍທ່ານຍິງ-ທ່າຍຊາຍ ເຂົ້າໃນພິທີທາງການ, ພິທີການ ແລະ ພິທີກຳ:**

- ການແຕ່ງກາຍຊຸດເຄື່ອງນຸ່ງຊຸດປະຈຳຊາດ ທ່າຍຍິງ-ທ່າຍຊາຍ ສາມາດນຸ່ງເຂົ້າຮ່ວມໃນພິທີທາງການ, ພິທີການ ແລະ ພິທີກຳ ຢູ່ພາຍໃນ ແລະ ຕ່າງປະເທດ ຕາມທີ່ໄດ້ກຳນົດໄວ້ໃນບັດເຊີນ "ແຕ່ງກາຍຊຸດປະຈຳຊາດ".
- ການບ່ຽງຜ້າບ່ຽງ ຂອງ ທ່ານຍິງ-ທ່ານຊາຍ ໃຫ້ເອົາຜ້າບ່ຽງພາດໃສ່ບ່າເບື້ອງຊ້າຍ.

**III. ການຈັດຕັ້ງປະຕິບັດ**

ບັນດາກະຊວງ, ອົງການຈັດຕັ້ງ ພັກ-ລັດ, ອົງການຈັດຕັ້ງມະຫາຊົນ, ອົງການປົກຄອງທ້ອງຖິ່ນ, ອົງການຈັດຕັ້ງສັງຄົມ, ທຸກພາກສ່ວນທີ່ກ່ຽວຂ້ອງ ໃຫ້ຈັດຕັ້ງປະຕິບັດ ດຳລັດວ່າດ້ວຍຊຸດເຄື່ອງນຸ່ງປະຈຳຊາດ ຢ່າງເຂັ້ມງວດ.

**ເອກະສານຊ້ອນທ້າຍ:**
ຮູບແບບຕົວຢ່າງ
ຊຸດເຄື່ອງນຸ່ງປະຈຳຊາດ
ຂອງທ່ານ ຍິງ - ທ່ານຊາຍ.

**ລັດຖະມົນຕີ**

ລັດຖະມົນຕີ

**ສວນສະຫວັນ ວິຍະເກດ**